

# ວຽກງານດ້ານຂໍ້ມູນຂອງ ເພດຍິງໃນພາກພື້ນແມ່ນ້ຳຂອງ

## ບົດລາຍງານບໍລິຫານຂອງລາວ

OPEN DEVELOPMENT INITIATIVE
AN EAST-WEST MANAGEMENT INSTITUTE PROJECT

# ຂໍ້ຈຳກັດທາງເພດ ທີ່ເປັນອຸປະສັກຕົ້ນຕໍ ໃນການເຂົ້າເຖິງຂໍ້ມູນຂອງແມ່ຍິງ

## ບົດນຳ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຫຼື ເອີ້ນຫຍໍ້ວ່າ ສປປ ລາວ ມີປະຊາກອນປະມານ 6.5 ລ້ານຄົນ. ໂດຍວ່າ 2 ສ່ວນ 3 ຂອງຈຳນວນປະຊາກອນທັງໝົດ ແມ່ນອາໃສຢູ່ໃນເຂດຊົນນະບົດ. ປະເທດລາວເປັນປະເທດໜຶ່ງ ນອນໃນຂົງເຂດອາຊີຕະເວັນສຽງໃຕ້ ທີ່ປະກອບມີຫຼາກຫຼາຍຊົນເຜົ່າອາໄສຢູ່ຮ່ວມກັນ. ໃນນີ້ປະກອບດ້ວຍ 50 ຊົນເຜົ່າໃຫຍ່ ແລະ ຍັງໄດ້ແບ່ງອອກເປັນຫລາຍກວ່າ 200 ຊົນເຜົ່າຍ່ອຍ[1]. ສປປ ລາວ ຖືກຈັດຢູ່ໃນປະເທດທີ່ກຳລັງພັດທະນາ, ມີອັດຕາຄວາມທຸກຍາກຂອງປະຊາກອນສູງ, ປະຊາຊົນຍັງມີລາຍຮັບທີ່ບໍ່ດຸ່ນດ່ຽງກັບລາຍຈ່າຍ ແລະ ຍັງເກີດມີຄວາມບໍ່ທັນເທົ່າທຽມກັນໃນເລື່ອງເພດ ໂດຍອ້າງອີງຈາກຕົວຊີ້ວັດ ການພັດທະນາກ່ຽວກັບເລື່ອງເພດ ຂອງອົງການສະຫະປະຊາຊາດ. ອັດຕາການຮູ້ຫນັງສື ແລະ ການສຶກສາຊັ້ນສູງ ແລະ ເລື່ອງອື່ນໆສຳລັບເພດຍິງ ແມ່ນຍັງຖືວ່າດ້ອຍກວ່າເພດຊາຍ ໂດຍສະເພາະແມ່ນເພດຍິງທີ່ເປັນຊົນເຜົ່າທີ່ອາໄສຢູ່ເຂດຊົນນະບົດ. ເພດຍິງ ແມ່ນມີໂອກາດໜ້ອຍກວ່າຜູ້ຊາຍ ໃນເລື່ອງຂອງການຖືກຮັບເຂົ້າເຮັດວຽກ ໃນພາກລັດ ແລະ ຍິ່ງມີໂອກາດໜ້ອຍຫຼາຍສຳລັບແມ່ຍິງທີ່ເປັນຊົນເຜົ່າກຸ່ມນ້ອຍ ໃນເຂດຊົນນະບົດຫ່າງໄກສອກຫຼີກ. ເພດຍິງບໍ່ໄດ້ຖືກຍົກໃຫ້ເປັນຕົວແທນໃນຂະແໜງວິຊາຊີບ, ໃນວຽກງານບໍລິຫານຈັດການ ແລະ ໃນວຽກງານການປົກຄອງ. ໂດຍສະເພາະວຽກງານເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານໂດຍທົ່ວໄປ ແມ່ນເຈາະຈົງໄປທີ່ເພດຊາຍເປັນຫຼັກ. ຄ່ານິຍົມໃນການເຮັດວຽກຢູ່ເຮືອນຖືວ່າເປັນສິ່ງສຳຄັນຕົ້ນຕໍຂອງເພດຍິງ ແລະ ການມີສ່ວນຮ່ວມໃນດ້ານສຶກສາຖືວ່າເປັນສິ່ງສຳຮອງ. ເປັນຕົ້ນແມ່ນເພດຍິງທີ່ອາໄສຢູ່ໃນເຂດຊົນນະບົດ. ເຂົາເຈົ້າ ຈະຖືກພິຈາລະນາວ່າບໍ່ເໝາະສົມ ໃນການສຶກສາແບບບູລະນາການຄືປະກອບມີ 4 ສາຂາວິຊາເຊັ່ນ: ສາຂາວິທະຍາສາດ, ສາຂາວິສະວະກຳ, ສາຂາເຕັກໂນໂລຊີ ແລະ ສາຂາຄະນິດສາດ (ເອີ້ນຫຍໍ້ວ່າ ການສຶກສາແບບ STEM) ແລະ ການນຳໃຊ້ເຕັກໂນໂລຊີ ແມ່ນຖືວ່າບໍ່ມີຄວາມຈຳເປັນສຳລັບເຂົາເຈົ້າ. ອິນເຕີເນັດ ແລະ ສື່ສັງຄົມອອນລາຍແມ່ນກຳລັງຖືກໃຊ້ງານເພີ່ມຂຶ້ນຢ່າງກວ້າງຂວາງ, ສ່ວນໃຫຍ່ແລ້ວ ແມ່ນສື່ສັງຄົມອອນລາຍທີ່ນຳໃຊ້ເຟດບຸກ (Facebook). ການເຊື່ອມຕໍ່ແບບໄຮ້ສາຍແມ່ນຍັງມີຄວາມທ້າທາຍ, ແລະ ຄົນສ່ວນໜ້ອຍທີ່ຈະສາມາດເຂົ້າເຖິງເຕັກໂນໂລຊີແບບນີ້ໄດ້ໃນເຂດຊົນນະບົດທີ່ຫ່າງໄກສອກຫຼີກ, ໂດຍສະເພາະແມ່ນເພດຍິງ ແລະ ບັນດາກຸ່ມຄົນຊົນເຜົ່າ. ຊ່ອງວ່າງເລື່ອງເພດເກີດຂຶ້ນໄດ້ໃນທຸກພື້ນທີ່ ໂດຍສະເພາະແມ່ນເລື່ອງການເຂົ້າເຖິງ, ການນຳໃຊ້ ແລະ ທັກສະຕ່າງໆ. ຂໍ້ມູນແມ່ນຍັງຖືກປິດກັ້ນຢູ່, ໂດຍການເປີດເຜີຍຂໍ້ມູນໃນເລື່ອງທີ່ກ່ຽວຂ້ອງກັບເລື່ອງເພດຢູ່ແມ່ນຖືວ່າຍັງຢູ່ໃນລະດັບສູນ[2].

## ນິຕິກຳ ແລະ ກົດໝາຍທີ່ກ່ຽວຂ້ອງ

ໃນຂະນະທີ່ ສປປ ລາວ ໄດ້ໃຫ້ການຊຸກຍູ້ການໃຫ້ສິດເທົ່າທຽມກັນລະຫວ່າງຍິງຊາຍ, ຄວາມເປັນຈິງແລ້ວໃນທາງປະຕິບັດແມ່ນຍັງບໍ່ທັນກວ້າງຂວາງ. ນະໂຍບາຍກ່ຽວກັບການຖືກພິຈາລະນາເລື່ອງເພດ, ແມ່ນປາສະຈາກການພິຈາລະນາ ໃນດ້ານແງ່ມູມອື່ນໆຂອງຊີວິດ, ລວມທັງການເຂົ້າເຖິງເຕັກໂນໂລຊີ[3]. ໃນແຜນແມ່ບົດແຫ່ງຊາດກ່ຽວກັບການຕ້ານ ແລະ ສະກັດກັ້ນຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ (2021–2025)[4]. ກົດບັນຍັດ 2 ສະບັບ ສຳລັບເພດຍິງ ແລະ ກົດໝາຍຄວາມເທົ່າທຽມກັນທາງເພດແມ່ນໄດ້ຖືກຮອງຮັບເມື່ອບໍ່ດົນມານີ້[5] ໃນຂະນະທີ່ກົດຫມາຍເຫຼົ່ານີ້ກ່າວເຖິງເລື່ອງຄວາມເທົ່າທຽມທາງເພດ, ການອອກກົດຫມາຍຄຸ້ມຄອງສະຫນັບສະຫນູນສິດເທົ່າທຽມກັນແມ່ນຍັງຖືວ່າ ເປັນເລື່ອງທີ່ຖືກຈຳກັດຢູ່ເຊັ່ນ: ການສຶກສາ ຫລື ສິ່ງທີ່ບໍ່ມີຕົວຕົນຢູ່ຈິງ, ເຊັ່ນການເຂົ້າເຖິງຂໍ້ມູນຂ່າວສານ. ກົດໝາຍວ່າດ້ວຍ ສື່ມວນຊົນ (ສະບັບເລກທີ 01/NA, 2008)[6] ແລະ ດຳລັດວ່າດ້ວຍການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ (ສະບັບເລກທີ 327/GOV, 2014)[7] ໃຫ້ປະຊາຊົນໄດ້ເຂົ້າເຖິງສື່ທີ່ຖືກຕ້ອງ, ແຕ່ສື່ເຫຼົ່ານັ້ນແມ່ນຕ້ອງຢູ່ພາຍໃຕ້ການຊີ້ນຳຂອງລັດຖະບານເປັນຫຼັກ ແລະ ມີສິດອຳນາດໃນການກຳນົດສື່ ແລະ ບັນດາຊ່ອງທາງໃນການເຜີຍແຜ່ຂໍ້ມູນຂ່າວສານ. ບາງກົດຫມາຍສະບັບໃໝ່ແມ່ນໄດ້ຍົກໃຫ້ເຫັນບັນຫາໄອຊີທີ (ກົດໝາຍວ່າດ້ວຍ ເຕັກໂນໂລຊີ ການສື່ສານ ຂໍ້ມູນຂ່າວສານ (ສະບັບ ເລກທີ 02/NA, 2016)[8] ແລະ ການຄຸ້ມຄອງຂໍ້ມູນ (ກົດຫມາຍວ່າດ້ວຍການປົກປ້ອງຂໍ້ມູນ ເອເລັກໂຕຣນິກ (ສະບັບເລກທີ 25/NA, 2017))[9]. ໜຶ່ງໃນອົງການສູນກາງທີ່ເຄື່ອນໄຫວເຮັດວຽກເປັນກະບອກສຽງ, ເປັນຕົວແທນໃຫ້ແມ່ຍິງໃນ ສປປ ລາວ ແມ່ນ ສູນກາງສະຫະພັນແມ່ຍິງລາວ (LWU). ທີ່ສຳຄັນຍັງມີງານວູເມັນເທັກເມກເກີວຽນທຽນ (Women Tech- makers Vientiane) ທີ່ໄດ້ສະຫນັບສະໜຸນແມ່ຍິງໃຫ້ເຂົ້າເຖິງ, ຮຽນຮູ້ ແລະ ປະຍຸກໃຊ້ເຕັກໂນໂລຊີ, ເຊິ່ງງານດັ່ງກ່າວມັກຈະຖືກຈັດຂຶ້ນພ້ອມໆກັບງານບາແຄ້ມຢ່າງເປັນປະຈຳໃນທຸກໆປີ.

ນອກຈາກນີ້, ຍັງມີອົງການໂອເພັນດີວີລົບເມັນລາວ (Open Development Laos) ທີ່ເຄື່ອນໄຫວເຮັດວຽກງານກ່ຽວກັບແມ່ຍິງຕື່ມອີກ ຊຶ່ງຜ່ານມາແມ່ນຍັງບໍ່ປາກົດມີຂໍ້ມູນຂອງໂຄງການລິເລີ່ມອື່ນໆທີ່ກ່ຽວຂ້ອງເທື່ອ.

## ການສຳຫຼວດຂໍ້ມູນ

ເຖິງແມ່ນວ່າແມ່ຍິງທຸກຄົນທີ່ຖືກສຳພາດຈະຮູ້ສຶກວ່າຂໍ້ມູນ ແລະ ຂໍ້ມູນຂ່າວສານເປັນສິ່ງທີ່ສຳຄັນສຳລັບຊີວິດປະຈຳວັນ ແລະ ເຕັກໂນໂລຊີກໍສາມາດເຮັດໃຫ້ຊີວິດການເປັນຢູ່ສະດວກສະບາຍຂຶ້ນກວ່າເກົ່າ, ເຮັດໃຫ້ເກີດທັກສະທີ່ຫຼາກຫຼາຍ, ສາມາດເພີ່ມລາຍຮັບ,ຊ່ວຍໃນການສຶກສາຂໍ້ມູນທາງພູມສາດ, ແລະ ສາມາດສ້າງອາຊີບໄດ້. "ຂໍ້ມູນເປີດ" ຫຼື ຂໍ້ມູນທີ່ທຸກຄົນສາມາດນຳໄປໃຊ້ໄດ້ ຢ່າງອິດສະຫຼະເຊັ່ນ: ສາມາດນຳໄປໃຊ້, ນຳກັບມາໃຊ້ຄືນໃໝ່, ຫຼື ສາມາດນຳໄປເຜີຍແຜ່ໄດ້ແບບອິດສະຫຼະ ແມ່ນຍັງບໍ່ທັນໄດເປີດກວ້າງ, ໂດຍສະເພາະແມ່ນບັນດາແນວຄວາມຄິດທີ່ບໍ່ໄດ້ຖືກແປອອກມາເປັນພາສາລາວ. ຜູ້ຖືກສຳພາດມັກຈະເຂົ້າໃຈສະເໝີວ່າຂໍ້ມູນຂ່າວສານ ສ່ວນໃຫຍ່ຈະເປັນພາສາອັງກິດ ແລະ ມັກຈະມີການຄວບຄຸມການເຂົ້າເຖິງຂໍ້ມູນຂ່າວສານຈາກທາງພາກລັດຢູ່. ຜູ້ຖືກສຳພາດໄດ້ເຂົ້າເຖິງສື່ຂໍ້ມູນຕ່າງໆທີ່ຫຼາກຫຼາຍ ແລະ ມີຫຼາຍແຫຼ່ງຂໍ້ມູນຂ່າວສານໃຫ້ໄດ້ເລືອກ ເປັນຕົ້ນແມ່ນຈາກໜັງສືພິມ, ໂທລະພາບ, ວິທະຍຸ ແລະ ຈາກໝູ່ເພື່ອນ, ແຕ່ສ່ວນໃຫຍ່ແລ້ວສື່ດິຈິຕອນທີ່ໄດ້ຮັບຄວາມນິຍົມຫຼາຍກວ່າໝູ່ກໍແມ່ນເຟດບຸກ (Facebook). ຊຶ່ງການບໍລິການຂອງເຟດບຸກແມ່ນຖືກສ້າງຂຶ້ນມາເພື່ອຄວາມບັນເທີງ ແລະ ເພື່ອການສ້າງສັງຄົມແບບອອນລາຍ, ແນວໃດກໍ່ຕາມເຟດບຸກຈະຖືກຕີລາຄາວ່າມີຄວາມ ໜ້າເຊື່ອຖືສຳລັບການແລກປ່ຽນຂໍ້ມູນ ແລະ ຂ່າວສານ ແຕ່ໂດຍລວມແລ້ວ ເຟດບຸກຍັງເປັນສື່ທີ່ຍັງຖືກຄວບຄຸມຈາກທາງພາກລັດຢູ່. ເຊິ່ງລັດຖະບານເອງ ກໍໄດ້ມີການປຸກລະດົມໃຫ້ປະຊາຊົນຕໍ່ຕ້ານກັບ "'ຂ່າວປອມ" ແລະ ຂໍ້ມູນຂ່າວສານທີ່ບໍ່ຖືກຕ້ອງ, ໃຫ້ປະຊາຊົນໄດ້ຄຳນຶງ ເຖິງຄວາມສ່ຽງໃນການໃຊ້ງານສື່ສັງຄົມອອນລາຍ. ຜູ້ຖືກສຳພາດໄດ້ສະແດງທັດສະນະຄວາມຄິດເຫັນຂອງຕົນເອງ ເຊິ່ງຊີ້ໃຫ້ເຫັນເຖິງບັນຫາຄວາມບໍ່ເທົ່າທຽມທາງເພດທີ່ຝັງຮາກເລິກໃນສັງຄົມເຮົາ ແມ່ນຍັງບໍ່ໄດ້ຮັບການພິຈາລະນາແກ້ໄຂຢ່າງຈິງຈັງເທື່ອ. ຍິ່ງໄປກວ່ານັ້ນ, ແນວຄວາມຄິດກ່ຽວກັບເລື່ອງເພດແມ່ນຖືວ່າເປັນສິ່ງທີ່ບໍ່ມີສາລະ ແລະ ມັກຈະຖືກເບິ່ງວ່າເປັນບັນຫາສຳລັບຄົນອື່ນ.

ຜູ້ຖືກສຳພາດບາງທ່ານຍັງໄດ້ໃຫ້ທັດສະນະຄວາມຄິດເຫັນວ່າບໍ່ແມ່ນຂໍ້ມູນ ແລະ ຂໍ້ມູນຂ່າວສານທັງໝົດ ທີ່ມີຄວາມກ່ຽວພັນກັບແມ່ຍິງ, ມັນຫາກຂຶ້ນກັບວິຊາອາຊີບຂອງພວກເຂົາເຈົ້ານັ້ນເອງ. ບາງຄົນຕັ້ງຂໍ້ສັງເກດວ່າແມ່ຍິງເຂົ້າເຖິງ ສື່ຫລັກສຳລັບຈຸດປະສົງເພື່ອຄວາມບັນເທີງເທົ່ານັ້ນ, ເຊິ່ງນັ້ນສະແດງໃຫ້ເຫັນວ່າແມ່ຍິງບໍ່ໄດ້ເບິ່ງຂ່າວ ຫລືຂໍ້ມູນຂ່າວສານທີ່ກ່ຽວຂ້ອງ. ແມ່ຍິງຄົນຫນຶ່ງທີ່ອາໄສຢູ່ຊົນນະບົດມີຄວາມເຫັນວ່າ ຖ້າຜູ້ເປັນສາມີສາມາດເຂົ້າເຖິງເຕັກໂນໂລຊີໄດ້, ຜູ້ເປັນພັນລະຍາອາດບໍ່ຈຳເປັນຕ້ອງເຂົ້າເຖິງເຕັກໂນໂລຊີກໍໄດ້. ຜູ້ຖືກສຳພາດບາງທ່ານເຄີຍມີປະສົບການໃນການຖືກດູຖູກກ່ຽວກັບຄວາມພະຍາຍາມທີ່ຈະຮຽນຮູ້ ແລະ ນຳໃຊ້ເຕັກໂນໂລຊີ.

## ອຸປະສັກ

ອຸປະສັກຕົ້ນຕໍທີ່ສຳຄັນສຳລັບແມ່ຍິງນັ້ນກໍຄື **ການຍຶດຕິດກັບຄວາມບໍ່ທຽມຂອງເພດໃນສັງຄົມ.** ອຸປະສັກຕົ້ນຕໍທີ່ສຳຄັນສຳລັບແມ່ຍິງນັ້ນກໍຄືການຍຶດຕິດກັບຄວາມບໍ່ທຽມຂອງເພດໃນສັງຄົມ. ຜົນທີ່ໄດ້ມານັ້ນ ກໍຄືແມ່ຍິງຈະຕ້ອງໃຫ້ເຮັດວຽກແບບບໍ່ໄດ້ຮັບຄ່າຈ້າງຫຼາຍກວ່າຜູ້ຊາຍແລະ ຍິ່ງໄປກວ່ານັ້ນ, ແມ່ຍິງຈະມີເວລາຫວ່າງໜ້ອຍກວ່າຜູ້ຊາຍ ໃນການທີ່ຈະໄດ້ນຳໃຊ້ເຕັກໂນໂລຊີ ປະກອບກັບການມີໂອກາດໜ້ອຍທີ່ຈະມີກຳລັງຊື້ ແລະ ມີທັກສະໃນການເຂົ້າເຖິງເຕັກໂນໂລຊີ ແລະ ຂໍ້ມູນ. ແມ່ຍິງແມ່ນມີໂອກາດໜ້ອຍທີ່ຈະອ່ານອອກຂຽນໄດ້ ແລະ ໄດ້ຮັບການສຶກສາ ແລະ ບໍ່ມີແຮງບັນດານໃຈໃນການຊອກຮູ້ຮ່ຳຮຽນຕາມຮູບແບບຂອງລະບົບ STEM ເພາະວ່າແມ່ຍິງຖືກປະເມີນວ່າມີຄວາມສາມາດໜ້ອຍໃນວຽກງານດັ່ງກ່າວ. ບັນຫາທີ່ກ່ຽວຂ້ອງອື່ນໆນັ້ນກໍຄື ແມ່ຍິງບໍ່ໄດ້ສະແດງອອກ ຢ່າງເປີດເຜີຍກ່ຽວກັບໃນເລື່ອງຂອງການບໍ່ເທົ່າທຽມທາງເພດທີ່ມີຢູ່. ໃນບົດຄວາມນີ້ຍັງມີຈຳນວນຜູ້ທີ່ບໍ່ສະແດງຄວາມຄິດເຫັນຢ່າງຫຼວງຫຼາຍ ເພາະມັນເປັນເລື່ອງຍາກທີ່ຈະຍອມຮັບບໍ່ເທົ່າທຽມທາງເພດດັ່ງກ່າວໄດ້.

## ຄຳແນະນຳພາກລັດ

ໃຫ້ມີການຈັດຕັ້ງກິດຈະກຳເພື່ອສົ່ງເສີມແມ່ຍິງໃນເລື່ອງຂອງຄວາມເປັນຜູ້ນຳທາງດ້ານຂໍ້ມູນຂ່າວສານ, ການຄົ້ນຄວ້າວິໄຈ ແລະ ເຕັກໂນໂລຊີ ເພື່ອເສີມສ້າງແມ່ຍິງໃຫ້ກາຍເປັນທີ່ປຶກສາ ແລະ ເປັນແບບຢ່າງທີ່ດີໃຫ້ກັບແມ່ຍິງຄົນອື່ນໆ.

ເຊິ່ງບັນດາກິດຈະກຳເຫຼົ່ານັ້ນ ຄວນຈະລວມເອົາການເປີດໂອກາດເຮັດໃຫ້ແມ່ຍິງໄດ້ມີການແລກປ່ຽນທີ່ກ່ຽວຂ້ອງກັບເຕັກໂນໂລຊີ ແລະ ຂໍ້ມູນເພື່ອການຮຽນຮູ້ຮ່ວມກັນ.

**ພາກເອກະຊົນ**

ປຸກລະດົມໃຫ້ປະຊາຊົນ ໄດ້ເຮັດວຽກ ແລະ ມີຄວາມສົນໃຈໃນເຕັກໂນໂລຊີຂໍ້ມູນຂ່າວສານ (ໄອທີ) ທີ່ກ່ຽວຂ້ອງກັບຂໍ້ມູນແບບເປີດ ແລະ ສະແດງໃຫ້ເຫັນເຖິງຄວາມກ່ຽວຂ້ອງກັບວຽກງານຂອງເຂົາເຈົ້າ, ລວມໄປເຖິງການພັດທະນາກໍລະນີສຶກສາ ທີ່ມີປະສິດທິພາບເພື່ອສະແດງໃຫ້ເຫັນຄຸນຄ່າຂອງຂໍ້ມູນ;

**ພາກສັງຄົມພົນລະເຮືອນ**

ສ້າງບຸກຄະລະກອນເຕັກນິກເພດຍິງ ໃຫ້ມີຄວາມຮູ້ຄວາມສາມາດໃນດ້ານອິນເຕີເນັດ ແລະ ການນຳໃຊ້ຄອມພິວເຕີ/ມືຖື ໂດຍການຈັດຝຶກອົບຮົມ ແລະ ປະຕິບັດຕົວຈິງ. ໂດຍໃຫ້ເນັ້ນໜັກໄປທີ່ພະນັກງານຍິງໃນພາກລັດ, ນັກຮຽນຍິງ, ແລະ ແມ່ຍິງລາວໃນທົ່ວປະເທດ;

ນອກນັ້ນ, ອຸປະສັກຢ່າງອື່ນນັ້ນກໍຄື **ວັດທະນາທຳທີ່ຍັງບໍ່ເປີດກວ້າງ,** ເຊິ່ງນຳໄປສູ່ຄວາມພ້ອມໃນການໃຊ້ງານຂໍ້ມູນແບບເປີດ ແລະ ບັນຫາຄວາມໂປ່ງໃສຂອງໜ່ວຍງານຕ່າງໆ ກໍເປັນໜຶ່ງໃນປັດໃຈເຊັ່ນກັນ.

**ຄຳແນະນຳພາກລັດ**

ເສີມສ້າງຄວາມພະຍາຍາມໃນການຮວບຮວມ ແລະ ການເຜີຍແຜ່ຂໍ້ມູນທາງສະຖິຕິທີ່ນຳໂດຍລັດຖະບານ ເຊິ່ງຍຶດຖືບົນພື້ນຖານການສົ່ງເສີມຂໍ້ມູນແບບເປີດ, ໂດຍສະເພາະແມ່ນມີຄວາມຮັບຜິດຊອບໃນການເປີດເຜີຍຂໍ້ມູນຕໍ່ສາທາສະນະ ແລະ ການເຂົ້າເຖິງຂໍ້ມູນສຳລັບທຸກໆຄົນ; ຄຸ້ມຄອງການເຂົ້າເຖິງຂໍ້ມູນຂອງພົນລະເມືອງລາວຢ່າງຖືກຕ້ອງ ບໍ່ວ່າຈະຜ່ານການແກ້ໄຂລັດຖະທຳມະນູນ ຫລື ຜ່ານກົດຫມາຍ ແລະ ນະໂຍບາຍທີ່ສະເພາະເຈາະຈົງ; ຫຼຸດບັນຫາທີ່ກ່ຽວຂ້ອງກັບລັດຖະກອນ ແລະ ອຸປະສັກທາງການເງິນ ໃນການເຂົ້າເຖິງຂໍ້ມູນ ແລະ ຂໍ້ມູນຂ່າວສານສາທາລະນະທົ່ວໄປຈາກທາງກະຊວງຕ່າງໆ. ເສີມສ້າງຄວາມເຂັ້ມແຂງໃນການບໍລິການເອເລັກໂຕຣນິກຂອງລັດຖະບານ (e-government) ເພື່ອໃຫ້ໝັ້ນໃຈວ່າລະບົບຖານຂໍ້ມູນອອນລາຍແມ່ນໄດ້ເປີດກວ້າງ, ມີມາດຕະຖານ, ແລະ ສາມາດໃຊ້ງານຮ່ວມກັນໄດ້;

**ພາກເອກະຊົນ**

ສະໜັບສະຫນູນຊຸກຍູ້ ຖານຂໍ້ມູນສ່ວນຕົວທີ່ມີຢູ່ (ທີ່ກຳລັງໃຊ້ງານຢູ່ໂດຍພາກເອກະຊົນ, ສັງຄົມພົນລະເຮືອນ, ຜູ້ຮ່ວມພັດທະນາ ແລະ ກຸ່ມຄົນອື່ນໆ) ເຮັດໃຫ້ຂໍ້ມູນແບບເປີດເຕັມໄປດ້ວຍຫຼັກການທີ່ມີຄວາມໂປ່ງໃສ ແລະ ເປັນທີ່ຍອມຮັບໄດ້, ເຊັ່ນການລຶບລ້າງຂໍ້ກຳນົດຕ່າງໆ ໃນການສ້າງບັນຊີສຳລັບການເຂົ້າເຖິງ ແລະ ເຮັດໃຫ້ການເຂົ້າເຖິງຂໍ້ມູນທັງຫມົດ ຢູ່ໃນຮູບແບບເປີດ ແລະ ອະນຸຍາດໃຫ້ສາມາດດາວໂຫຼດໄດ້.

**ພາກສັງຄົມພົນລະເຮືອນ**

ພະຍາຍາມເຊື່ອມໂຍງບັນດາເຕັກໂນໂລຊີທີ່ເກີດຂຶ້ນໃໝ່ ແລະ ສ້າງໃບໜ້າໃໝ່ສຳລັບວຽກງານ ການພັດທະນາເວັບໄຊໃນ ສປປ ລາວ ໂດຍສ້າງໃຫ້ເກີດຂະບວນການໃນການປະຍຸກໃຊ້ຂໍ້ມູນແບບເປີດໃຫ້ກວ້າງຂວາງທີ່ສຸດ. ສະໜັບສະຫນູນຊຸກຍູ້ການເຜີຍຂໍ້ມູນທີ່ສຳຄັນໃນຮູບແບບພາສາອື່ນໆ ທີ່ນອກເໜືອຈາກພາສາລາວ ແລະ ຮູບແບບອື່ນທີ່ບໍ່ແມ່ນການຂຽນ (ຍົກຕົວຢ່າງເຊັ່ນວີດີໂອ ຫລື ສຽງເປັນຕົ້ນ).

# ເອກະສານອ້າງອີງ


[1] ໂອເພີນເດວີລົບເມັນລາວ Open Development Laos (2019). ຊົນເຜົ່າແລະຄົນພື້ນເມືອງ. ອ້າງອີງຈາກ: https://laos.opendevelopmentmekong.net/topics/ethnic-mi-norities-and indigenous-people/.

[2] ໂອເພີນດາຕ້າວອດສ Open Data Watch (2019). Country profile: Lao PDR. ອ້າງອີງ ຈາກ: http://odin.opendatawatch.com/Report/countryProfile/LAO?appConfigId=5

[3] ກະຊວງແຜນການ ແລະ ການລົງທຶນ. (2016). 8th ແຜນພັດທະນາເສດຖະກິດ 5 ປີ 2016-2020. ອ້າງອີງຈາກ:http://www.la.one.un.org/images/publications/8th_NSEDP_2016-2020.pdf

[4] ກອງທຶນເພື່ອປະຊາກອນ ຂອງສະຫະປະຊາຊາດ (2019). ແຜນປະຕິບັດງານແຫ່ງຊາດໃຫ້ບຸລິມະສິດການປະສານງານກັບຫຼາຍຝ່າຍໃນການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃນ ສປປລາວ. ອ້າງອີງຈາກ: https://lao.unfpa.org/en/news/new-naTIonal-plan-acTIon-prioriTIzing-multi-partner-coordination-combating-violence-against

[5] ສະພາແຫ່ງຊາດ (2004). ກົດຫມາຍວ່າດ້ວຍການພັດທະນາ ແລະ ການຄຸ້ມຄອງແມ່ຍິງ (No. 08/NA,2004). ອ້າງອີງຈາກ: https://www.ilo.org/dyn/travail/docs/1425/Law%20on%20the%20Development%20and%20Protection%20of%20Women%202004.pdf;ສະພາແຫ່ງຊາດ (2004). ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງແລະເດັກນ້ອຍ. ອ້າງອີງ ຈາກ: https://www.ilo.org/dyn/natlex/docs/ELECTRONIC/100542/128494/F1006481424/LAO100542%20Eng.pdf;ກອງທຶນເພື່ອປະຊາກອນຂອງສະຫະປະຊາຊາດ(2019). ແຜນປະຕິບັດງານ ຈັດລຳດັບຄວາມສຳຄັນຂອງການປະສານງານກັບຫຼາຍຝ່າຍໃນການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃນ ສປປລາວ. ອ້າງອີງຈາກ: https://lao.unfpa.org/en/news/new-na-tional-plan-acTIon-prioriTIzing-mulTI-partner-coordi-nation-combating-violence-against.

[6] ສະພາແຫ່ງຊາດ (2004). ກົດຫມາຍວ່າດ້ວຍສື່. ອ້າງອີງຈາກ: http://www.laoservicesportal.-gov.la/index.php?r=site%2Fdisplaylegal&id=92

[7] ລັດຖະບານແຫ່ງຊາດລາວ (2014). ດຳລັດວ່າດ້ວຍການຄຸ້ມຄອງຂໍ້ມູນຂ່າວສານທາງອິນເຕີເນັດ. ອ້າງອີງ ຈາກ: http://www.laoservicesportal.gov.la/index.php?r=site%2Fdisplaylegal&id=56.

[8] ສະພາແຫ່ງຊາດ (2016). ກົດໝາຍວ່າດ້ວຍເຕັກໂນໂລຢີຂໍ້ມູນຂ່າວສານແລະການສື່ສານ. ອ້າງອີງຈາກ: https://www.laoofficialgazette.gov.la/kcfinder/upload/files/%E0%BA%81%E0%BA%BB%E0%BA%94%E0%BB%9D%E0%BA%B2%E0%BA%8D%E0%BB%80%E0%BA%95%E0%BA%B1%E0%BA%81%E0%BB%82%E0%BA%99%E0%BB%82%E0%BA%A5%E0%BA%8A%E0%BA%B5%E0%BA%81%E0%BA%B2%E0%BA%99%E0%BA%AA%E0%BA%B7%E0%BB%88%E0%BA%AA%E0%BA%B2%E0%BA%99.pdf

[9] ລັດຖະບານແຫ່ງຊາດລາວ (2017). ກົດໝາຍວ່າດ້ວຍການປົກປ້ອງຂໍ້ມູນເອເລັກໂຕຣນິກ. ອ້າງອີງຈາກ: http://www.laoservicesportal.gov.la/index.php?r=site%2Fdisplaylegal&id=289.

ບົດລາຍງານບໍລິຫານຂອງ ສ ປປ ລາວ ສະບັບດັ່ງກ່າວ ແມ່ນເປັນສ່ວນໜຶ່ງຂອງວຽກງານຄົ້ນຄ້ວາ ກ່ຽວກັບ ແມ່ຍິງຢູ່ໃນພາກພື້ນແມ່ນ້ຳຂອງໃນການນຳໃຊ້ຂໍ້ມູນ ໂດຍການລົງສຳຫຼວດໂດຍ Open Development Initiative (ODI). ບົດລາຍງານສະບັບດັ່ງກ່າວ ແມ່ນໄດ້ຮັບກອງທຶນສະໜັບສະໜູນຈາກສູນຄົ້ນຄ້ວາ ແລະ ພັດທະນາສາກົນໂອຕາວາ, ປະເທດການາດາ: www.idrc.ca, ແລະ ໂດຍການສະໜັບສະໜູນທາງດ້ານງົບປະມານຈາກລັດຖະບານການາດາ ໂດຍຜ່ານ Global Affairs Canada (GAC).

ເນື້ອໃນຂອງບົດລາຍງານແມ່ນອີງຕາມຄຳຄິດເຫັນຈາກບັນດານັກຂຽນ, ຊຶ່ງບໍ່ໄດ້ສະແດງເຈດຈຳນົງຂອງ ODI ຫຼື ຜູ້ໃຫ້ທຶນແຕ່ຢ່າງໃດ.